ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສໍານັກງານນາຍົກລັດຖະມົນຕີ ເລກທີ 15 / ນຍ

ນະຄອນຫຼວງວຽງຈັນ, ວັນທີ 04. 02. 2004

# ດໍາລັດ

## ວ່າດ້ວຍການແຂ່ງຂັນການຄ້າ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 02/ສພຊ ລົງວັນທີ06 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍທຸລະກິດ ສະບັບເລກທີ 03/94/ສພຊ ລົງວັນທີ18 ກໍລະກົດ 1994;
- ອີງຕາມການສະເໜີຂອງລັດຖະມົນຕີວ່າການກະຊວງການຄ້າ, ສະບັບເລກທີ 0713/ກຄ.ສກຄ ລົງວັນທີ 18 ກໍລະກົດ 2003.

**ນາຍົກລັດຖະມົນຕີອອກດໍາລັດ:**

## ໝວດທີ1

## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ດໍາລັດສະບັບນີ້ວາງອອກເພື່ອ ກໍານົດລະບຽບການ ການຈັດຕັ້ງຕ້ານການຜູກຂາດ ແລະ ການແຂ່ງຂັນການຄ້າທີ່ບໍ່ເປັນທາໃນທຸກຮູບການ ແນໃສ່ ສົ່ງເສີມການແຂ່ງຂັນການຄ້າທີ່ເປັນທໍາ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງຜູ້ຊົມໃຊ້ ແລະ ຊຸກຍູ້ ການເຄື່ອນໄຫວທຸລະກິດການຄ້າ ຢູ່ ສປປ ລາວ ໃຫ້ດໍາເນີນໄປ ຕາມກົນໄກເສດຖະກິດຕະຫຼາດທີ່ມີການດັດສົມຂອງລັດຢ່າງມີປະສິດທິຜົນ.

### ມາດຕາ 2. ນິຍາມຄໍາສັບ

ໃນດາລັດສະບັບນີ້ ຄໍາວ່າ:

- “ການຄ້າ” ໝາຍເຖິງ ການຄ້າສິນຄ້າ ແລະ ການຄ້າການບໍລິການ;
- “ການຄອບຄອງເໜືອຕະຫຼາດ” ໝາຍເຖິງ ການມີຍອດເງິນຈໍາໜ່າຍ ແລະ ສ່ວນແບ່ງຕະຫຼາດ

ສິນຄ້າໃດໜຶ່ງ ຫຼື ການບໍລິການໃດໜຶ່ງ ຂອງໜຶ່ງ ຫຼື ຫຼາຍຜູ້ດໍາເນີນທຸລະກິດ ເກີນກວ່າທີ່ຄະນະກໍາມະການແຂ່ງຂັນການຄ້າກໍານົດໄວ້;

- "ການຄວບທຸລະກິດ" ໝາຍເຖິງ ການລວມຕົວກັນຂອງຜູ້ດໍາເນີນທຸລະກິດແຕ່ສອງຫົວໜ່ວຍທຸລະກິດຂຶ້ນການຄວບທຸລະກິດດັ່ງກ່າວ ຈະເຮັດໃຫ້ຫົວໜ່ວຍທຸລະກິດໜຶ່ງຄົງຢູ່ 83 ຫົວໜ່ວຍທຸລະກິດໜຶ່ງຍຸບເລີກ ຫຼື ເກີດ ເປັນຫົວໜ່ວຍທຸລະກິດໃໝ່;

- "ການຄວບຄຸມທຸລະກິດ" ໝາຍເຖິງການມີອໍານາດໃນການບໍລິຫານທຸລະກິດ ຂອງ ຜູ້ດໍາເນີນທຸລະກິດໜຶ່ງ ດ້ວຍການຊືຊັບສິນ ຫຼື ຊືຮຸ້ນທັງໝົດ ຫຼື ບາງສ່ວນຂອງຜູ້ດໍາເນີນທຸລະກິດອັນ

- "ການບໍລິການ" ໝາຍເຖິງ ການຮັບເຮັດ ຫຼື ໃຫ້ເຮັດສິ່ງໃດໜຶ່ງ ການໃຫ້ໃຊ້ ຫຼື ໃຫ້ປະໂຫຍດໃນຊັບສິ່ງຂອງ ຫຼື ກິດຈະການໃດໜຶ່ງໂດຍຮຽກຄ່າຕອບແທນເປັນເງິນ ຫຼື ຜົນປະໂຫຍດອື່ນ ຍົກເວັ້ນການຈ້າງແຮງງານ

- "ການຜູກຂາດ" ໝາຍເຖິງ ການຄອບຄອງເພື່ອຕະຫຼາດ ດ້ວຍວິທີການທີ່ບໍ່ເປັນທໍາຂອງຜູ້ດໍາເນີນທຸລະກິດ;

- "ສິນຄ້າ" ໝາຍເຖິງ ເຄື່ອງຂອງ ທີ່ໃຊ້ໃນການອຸປະໂພກ ສິດ ກ່ຽວກັບ ເຄື່ອງຂອງດັ່ງກ່າວ;

- "ຜູ້ດໍາເນີນທຸລະກິດ" ໝາຍເຖິງ ຫົວໜ່ວຍທຸລະກິດຈໍາໜ່າຍສິນຄ້າ ຫົວໜ່ວຍທຸລະກິດຊື້ສິນຄ້າ ເພື່ອຜະລິດ ຫຼື ເພື່ອຈາໜ່າຍຕໍ່ ແລະ ຜູ້ໃຫ້ບໍລິການໃນທຸລະກິດ;

**ມາດຕາ 3 ຫຼັກການພື້ນຖານໃນການແຂ່ງຂັນ**

ລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ ທັງຮ່ວມມືກັນ ທັງແຂ່ງຂັນກັນ, ຢ່າງເປັນທໍາບົນພື້ນຖານການປະຕິບັດຕາມດາລັດສະບັບນີ້ ແລະ ລະບຽບ ກົດໝາຍອື່ນໆທີ່ກ່ຽວຂ້ອງ

**ມາດຕາ 4 ຂອບເຂດການນໍາໃຊ້**

ດໍາລັດສະບັບນີ້ ມີຜົນບັງຄັບປະຕິບັດສໍາລັບການເຄື່ອນໄຫວທຸລະກິດການຄ້າສິນຄ້າ ແລະ ການຄ້າການບໍລິການ.

## ໝວດທີ 2

## ຄະນະກາມະການແຂ່ງຂັນການຄ້າ

**ມາດຕາ 5. ຄະນະກໍາມະການແຂ່ງຂັນການຄ້າ**

ຄະນະກໍາມະການແຂ່ງຂັນການຄ້າ ປະກອບດ້ວຍພາກສ່ວນທີ່ກ່ຽວຂ້ອງ ຂອງ ຂະແໜງການຄ້າ ແລະ ຜູ້ຊົງຄຸນວຸດທິຈໍານວນໜຶ່ງ.

ລັດຖະມົນຕີວ່າການກະຊວງການຄ້າເປັນປະທານໂດຍຕໍາແໜ່ງ ແລະ ແຕ່ງຕັ້ງສະມາຊິກຂອງ ຄະນະກໍາາມະ ການ ດັ່ງກ່າວ.

ຄະນະກໍາມະການແຂ່ງຂັນການຄ້າ ມີຫ້ອງການ ແລະ ກອງເລຂາ ປະຈາຢູ່ກະຊວງການຄ້າ.

**ມາດຕາ 6. ສິດ ແລພ ໜ້າທີ່ຂອງ ຄະນະກໍາມະການ**

ຄະນະກໍາມະການແຂ່ງຂັນການຄ້າມີສິດ ແລະ ໜ້າທີ່ດັ່ງນີ້:

- ຄົ້ນຄວ້າລະບຽບການກ່ຽວກັບການເຄື່ອນໄຫວວຽກງານ, ສິດ, ໜ້າທີ່ ຂອງກອງເລຂາ ພ້ອມທັງຊີ້ນໍາ, ນໍາພາການຈັດຕັ້ງປະຕິບັດວຽກງານ ຂອງກອງເລຂາດັ່ງກ່າວ;
- ຄົ້ນຄ້ວາ ອອກລະບຽບການເພີ່ມເຕີມ ໃນການຈັດຕັ້ງປະຕິບັດດາລັດສະບັບນີ້;
- ສ້າງຕັ້ງອະນຸກໍາມະການເພື່ອປະຕິບັດໜ້າທີ່ສະເພາະໃດໜຶ່ງເມື່ອມີຄວາມຈໍາເປັນ;
- ພິຈາລະນາຄໍາຮ້ອງຂໍ ແລະ ອອກ ອະນຸຍາດໃຫ້ແກ່ຜູ້ດໍາເນີນທຸລະກິດໃດໜຶ່ງຕາມທີ່ໄດ້ບົ່ງໄວ້ໃນມາດຕາ 13 ຂອງດໍາລັດສະບັບນີ້;
- ກໍານົດແລະແຈ້ງບັນຊີພາກສ່ວນແລະປະເພດທຸລະກິດຕາມທີ່ໄດ້ບົ່ງໄວ້ໃນມາດຕາ 13ຂອງດໍາລັດສະບັບ ນີ້;
- ຮຽກບຸກຄົນທີ່ກ່ຽວຂ້ອງມາພົບເພື່ອປຶກສາຫາລື ໃຫ້ຄໍາແນະນໍາ ຫຼື ຄວາມກະຈ່າງແຈ້ງ ໃນບັນຫາຕ່າງໆ ທີ່ກ່ຽວຂ້ອງ;
- ຕິດຕາມ ກວດກາການເຄື່ອນໄຫວທາງດ້ານທຸລະກິດການຄ້າ ແລະ ສັ່ງໃຫ້ຜູ້ດໍາເນີນທຸລະກິດໃດໜຶ່ງ ແກ້ໄຂ; ປຽນແປງ, ໂຈະຊົ່ວຄາວ ຫຼື ຢຸດເຊົາການກະທໍາຂອງຕົນທີ່ເຫັນວ່າບໍ່ເປັນທໍາ;
- ກໍານົດສ່ວນແບ່ງຕະຫຼາດ, ຍອດເງິນຈໍາໜ່າຍຂອງ ຜູ້ດໍາເນີນທຸລະກິດທີ່ຖືວ່າຄອບຄອງເໜືອຕະຫຼາດ;
- ກໍານົດ ຍອດຈໍາໜ່າຍຮຸ້ນ ຫຼື ຊັບສິນ ທີ່ຖືວ່າຄວບຄຸ່ມການບໍລິຫານທຸລະກິດ ຂອງຜູ້ດໍາເນີນທຸ

ລະກິດອື່ນ;

- ພິຈາລະນາ ຄຳຮ້ອງທຸກ ຂອງຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້;
- ສະເໜີໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງນຳໃຊ້ມາດຕະການຕໍ່ຜູ້ລະເມີດ;
- ປະສານກັບອົງການສົ່ງເສີມການລົງທຶນ ແລະ ບັນດາຫົວໜ່ວຍທຸລະກິດ ຂອງຜູ້ອຳນວຍການ

## ໝວດທີ 3

## ການແຂ່ງຂັນການຄ້າ

### ມາດຕາ 7. ການສົ່ງເສີມການແຂ່ງຂັນການຄ້າທີ່ເປັນທຳ

ລັດຖະບານ ສ ປ ປ ລາວ ສົ່ງເສີມບັນດາຫົວໜ່ວຍທຸລະກິດຂອງທຸກພາກສ່ວນເສດຖະກິດເຄື່ອນໄຫວທຸລະກິດການຄ້າພາຍໃຕ້ເງື່ອນໄຂການແຂ່ງຂັນການຄ້າທີ່ມີຄວາມສະເໝີພາບ, ເປັນທຳ, ທັງແຂ່ງຂັນກັນຢ່າງຕັ້ງໜ້າ.

### ມາດຕາ 8. ການຕ້ານການຜູກຂາດ

ຫ້າມບໍ່ໃຫ້ຜູ້ດຳເນີນທຸລະກິດ ນຳໃຊ້ທຸກຮູບການກະທຳຕາມທີ່ໄດ້ບົ່ງໄວ້ໃນມາດຕາ 9, 10, 11 ແລະ 12 ຂອງດຳລັດສະບັບນີ້ເພື່ອຜູກຂາດຕະຫຼາດສິນຄ້າໃດໜຶ່ງ ຫຼື ຕະຫຼາດການບໍລິການໃດໜຶ່ງ.

### ມາດຕາ 9. ການຄອບ ແລະ ການຄອບຄຸມທຸລະກິດ

ຫ້າມບໍ່ໃຫ້ຜູ້ດຳເນີນທຸລະກິດຄອບຄອງເໜືອຕະຫຼາດດ້ວຍຮູບການຄອບທຸລະກິດ ຫຼື ຄອບຄຸມທຸລະກິດຊຶ່ງເປັນການທຳລາຍຜູ້ແຂ່ງຂັນ ຫຼຸດ ຫຼື ຈຳກັດການແຂ່ງຂັນຢ່າງຮ້າຍແຮງ.

### ມາດຕາ 10. ການທຳລາຍຜູ້ດຳເນີນທຸລະກິດອື່ນ

ທຸກການກະທຳທີ່ເປັນການສ້າງຄວາມເສຍຫາຍບໍ່ວ່າທາງກົງ ຫຼື ທາງອ້ອມ ເຊັ່ນ: ການຫຸ້ມຕະຫຼາດ, ການຈຳກັດ ຫຼື ການແຊກແຊງ ເພື່ອທຳລາຍຜູ້ດຳເນີນທຸລະກິດອື່ນລ້ວນແຕ່ຖືກເກືອດຫ້າມ.

### ມາດຕາ 11. ການຕົກລົງຮ່ວມກັນ ແລະ ການສົມຮູ້ຮ່ວມຄິດກັນ

ຫ້າມຜູ້ດຳເນີນທຸລະກິດຕົກລົງຮ່ວມກັນ ຫຼື ສົມຮູ້ຮ່ວມຄິດກັນດຳເນີນການແຂ່ງຂັນການຄ້າທີ່ບໍ່ເປັນທຳໃນລັກສະນະໃດໜຶ່ງລຸ່ມນີ້:

- ກຳນົດລາຄາ, ຮັກສາລະດັບລາຄາຊື້, ລາຄາຂາຍສິນຄ້າ ຫຼື ຄ່າບໍລິການ;
- ກັກຕຸນສິນຄ້າ ຢຸດເຊົາ ຫຼຸດປະລິມານ ຫຼື ຈຳກັດການຜະລິດ ການຊື້, ການຂາຍ ການສົ່ງມອບ

ການນຳເຂົ້າສິນຄ້າ ແລະ ການບໍລິການ ໂດຍບໍ່ສົມເຫດສົມຜົນ;

- ຮ່ວມກັນເພື່ອຊະນະການແຂ່ງຂັນການປະມູນຊື້ ປະມູນຂາຍສິນຄ້າ ຫຼື ການບໍລິການ;

- ກຳນົດເງື່ອນໄຂ ທີ່ມີລັກສະນະບັງຄັບໂດຍທາງກົງ ຫຼື ທາງອ້ອມ ໃຫ້ຜູ້ດຳເນີນທຸລະກິດທີ່ເປັນລູກຄ້າ ຕ້ອງຈຳກັດການຜະລິດ, ການຊື້ ຫຼື ການຂາຍ ຫຼື ການໃຫ້ການບໍລິການ ໃນພື້ນທີ່ໃດໜຶ່ງ;

- ຈຳກັດໂອກາດ ຂອງ ລູກຄ້າ ໃນການເລືອກຊື້ ເລືອກຂາຍສິນຄ້າ ແລະ ການໄດ້ຮັບການບໍລິການ ໃນພື້ນທີ່ໃດໜຶ່ງ;

- ຫ້າມບໍ່ໃຫ້ຜູ້ສະໜອງສິນຄ້າ ຫຼື ຜູ້ຈຳໜ່າຍສິນຄ້າຂອງຕົນ ຊື້ ຫຼື ຂາຍສິນຄ້າ ກັບຜູ້ດຳເນີນທຸລະກິດອື່ນ;

- ກຳນົດພື້ນທີ່ ຫຼື ແບ່ງລູກຄ້າ ຫຼື ຜູ້ສະໜອງໂດຍບໍ່ມີການແຂ່ງຂັນ;

- ແຕ່ງຕັ້ງ ຫຼື ມອບຫມາຍໃຫ້ບຸກຄົນໃດໜຶ່ງດຳເນີນທຸລະກິດແຕ່ພຽງຜູ້ດຽວໃນການຈຳໜ່າຍສິນຄ້າ ຫຼື ໃຫ້ການລິການ ບໍລິການ ໃນພື້ນທີ່ໃດໜຶ່ງ;

- ກຳນົດການເງື່ອນໄຂ ຫຼື ວິທີການ ການປະຕິບັດໃຫ້ຄືກັນ ໃນການຊື້, ການຂາຍສິນຄ້າ ຫຼື ການໃຫ້ການບໍລິການ ເພື່ອ ສ້າງຄວາມຫຍຸ້ງຍາກໃຫ້ທຸລະກິດອື່ນ;

- ກຳນົດເງື່ອນໄຂ ຫຼື ວິທີການ ການປະຕິບັດໃຫ້ຄືກັນ ໃນການຊື້, ການຂາຍສິນຄ້າ ຫຼື ການໃຫ້ການບໍລິການເພື່ອ ສ້າງຄວາມຫຍຸ້ງຍາກໃຫ້ທຸລະກິດອື່ນ;

- ກະທຳຢ່າງອື່ນ ຊຶ່ງຂັດກັບລະບຽບການ ວ່າດ້ວຍການແຂງຂັນການຄ້າ ຊຶ່ງ ຄະນະກຳມະການແຂ່ງຂັນການຄ້າກຳນົດອອກ.

**ມາດຕາ 12. ການຮ່ວມກັນຜູກຂາດ ກັບ ຜູ້ດຳເນີນທຸລະກິດຕ່າງປະເທດ**

ຫ້າມຜູ້ດຳເນີນທຸລະກິດທີສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດຢູ່ ສ ປ ປ ລາວ ຊຶ່ງມີການພົວພັນທາງດ້ານທຸລະກິດກັບ ຜູ້ດຳເນີນທຸລະກິດຢູ່ຕ່າງປະເທດ ບໍ່ວ່າດ້ວຍສັນຍາ, ການຖືຮຸ້ນ ຫຼື ດ້ວຍຮູບການອື່ນໆ ດຳເນີນຜູ້ດຳເນີນທຸລະກິດຢູ່ຕ່າງປະເທດ ດ້ວຍຮູບການອື່ນໆ ດຳເນີນການໃດໜຶ່ງເພື່ອຈຳກັດໂອກາດ ຂອງ ຫົວໜ່ວຍທຸລະກິດພາຍໃນ ໃນການເລືອກຊື້ ເລືອກຂາຍສິນຄ້າ ຫຼື ການບໍລິການ ໂດຍກົງກັບ ຜູ້ດຳເນີນທຸລະກິດຢູ່ຕ່າງປະເທດ.

**ມາດຕາ 13. ຂໍ້ຍົກເວັ້ນ**

ການກະທຳໃດໜຶ່ງທີ່ກ່າວມາໃນມາດຕາ 8,9,10,11ແລະ12 ຂອງ ດຳລັດສະບັບນີ້ ອາດຈະຖືກຍົກເວັ້ນສຳ ລັບບາງພາກສ່ວນ ຫຼື ບາງປະເພດທຸລະກິດ ແລະອາດຈະຖືກອະນຸຍາດໃຫ້ຜູ້ດຳເນີນທຸລະກິດໃດໜຶ່ງດ້ວຍເຫດຜົນທາງ ດ້ານເສດຖະກິດ ແລະ ສັງຄົມ ຫຼື ຄວາມໝັ້ນຄົງ ຂອງຊາດ

ຄະນະກາມະການແຂ່ງຂັນການຄ້າ ເປັນຜູ້ພິຈາລະນາອອກຂໍ້ຍົກເວັ້ນ ແລະ ການໃຫ້ອະນຸຍາດໃນແຕ່ລະໄລຍະ ການໃຫ້ອະນຸຍາດແຕ່ລະຄັ້ງ ຕ້ອງໄດ້ຮັບຄຳເຫັນດີຈາກລັດຖະບານ.

## ໝວດທີ4

## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 14. ມາດຕະການ ຕໍ່ ການລະເມີດ ຂອງ ຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດ ທີ່ໄດ້ລະເມີດດຳລັດສະບັບນີ ແມ່ນຈະຖືກປະຕິບັດມາດຕະການໃນສະຖານໜັກ ຫຼື ເບົາຕາມແຕ່ລະກໍລະນີດັ່ງນີ້:

- ຕັກເຕືອນພ້ອມທັງໃຫ້ແກ້ໄຂ ປ່ຽນແປງການກະທຳ;
- ໂຈະກິດຈະການຊົ່ວຄາວຈົນກວ່າມີການແກ້ໄຂ ປ່ຽນແປງການກະທຳ;
- ໃຫ້ປິດກິດຈະການໂດຍຖາວອນ ແລະ ອາດຈະຖືກດຳເນີນຄະດີຕາມກົດໝາຍ;
- ໃຊ້ແທນຄ່າເສຍຫາຍທີເກີດຂື້ນຈາກການລະເມີດໃຫ້ແກ່ຫົວໜ່ວຍທຸລະກິດທີເສຍຫາຍ.

**ມາດຕາ 15. ການລະເມີດອື່ນໆ**

ທຸກການກະທຳຂອງລັດຖະກອນ ແລະ ເຈົ້າໜ້າທີ່ຊຶ່ງເປັນການລະເມີດຕໍ່ດາລັດສະບັບນີ້ ຕ້ອງໄດ້ຮັບຜິດຊອບຕໍ່ໜ້າກົດໝາຍ.

## ໝວດທີ5

## ບົດບັນຍັດສຸດທ້າຍ

**ມາດຕາ 16 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງການຄ້າ ແລະ ຄະນະກາມະການແຂ່ງຂັນການຄ້າເປັນຜູ້ຈັດຕັ້ງປະຕິບັດດຳລັດສະບັບນີ້.

**ມາດຕາ 17 ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດນັບແຕ່ ວັນທີ 1 ສິງຫາ 2004 ເປັນຕົ້ນໄປ.

ບົດບັນຍັດ ແລະ ລະບຽບການໃດທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ

ນາຍົກລັດຖະມົນຕີ

ບຸນຍັງ ວໍລະຈິດ